# Repainting or Fixing Up Your Older Home?

## Protect Your Family from Lead Poisoning



## Homes built before 1978 may have lead in the paint.

**Do not scrape or sand paint on your home unless you know it does not have lead in it.**

### Scraping and sanding old paint can create dangerous lead dust



Lead in dust is very harmful to young children and can cause lead poisoning. Lead can harm the brain, nerves, and kidneys of a young child. Lead poisoning can make it very hard for a young child to learn, pay attention, and behave.

### You and your family can swallow or breathe in lead dust

You can breathe in lead dust while dry scraping or sanding. Others nearby can breathe it in too.

Lead dust in the air can fall down into your food and drinks.

Lead dust can get into your child's body when they put things in their mouth that have lead dust on them, like their toys or hands.

### Have your paint tested for lead

The only way to know if your home has lead in the paint is to have it tested. For information about testing, go to www.cdph.ca.gov/Programs/CCDPHP/DEODC/CLPPB/Pages/home_test.aspx.

## Keep your family safe from lead

Hire a CA State Certified lead professional. These contractors are specially trained to test for lead in your home and safely remove it. To find a certified lead professional, go to www.cdph.ca.gov/Programs/CCDPHP/DEODC/CLPPB/Pages/LRChire_lead_prof.aspx or call **1-800-597-LEAD (5323)**.

While only CA State Certified lead professionals can find and remove lead from your home, all contractors hired for home repairs must get U.S. Environmental Protection Agency approved training to keep lead from spreading while they work. To find a contractor with this basic training, go to http://cfpub.epa.gov/flpp/searchrrp_firm.htm or call **1-800-424-LEAD (5323)**.

If you do not plan to hire a contractor, follow these tips to help contain lead dust while you work:

### Before you work

- Remove everything you can from the work area, like rugs, curtains, furniture, toys, clothes, shoes, food, and drinks.
- Tape down heavy plastic sheeting for both inside and outside jobs. Cover the floor, big furniture, play structures, and nearby outside surfaces, like grass or concrete.
- Turn off the heater or air conditioner.
- Tape plastic over vents in the floor, ceiling, or walls.



- Make a curtain by taping plastic sheeting over the doorway to the work area.
- Put on work clothes and keep them separate from all other clothes.

### While you work

- Keep children and pregnant women away from the work area.
- Use a spray bottle to mist all surfaces with water before and during sanding and scraping.
- Avoid tracking lead dust away from the work area:
  - Do not leave the work area in your work clothes and shoes.
  - Take off work clothes and shoes and wash your hands before sitting on furniture, playing with children, or touching toys or other objects.
- Do not eat, drink or smoke in the work area. Take off work clothes and shoes, wash your hands, and leave the work area before eating, drinking, or smoking.



### After you work

- Clean up the work area daily.
  - Use a spray bottle to mist paint chips. Carefully fold plastic sheeting inward and place in a tightly sealed bag. If your paint has lead in it, take the bag to your local household hazardous waste program: https://dtsc.ca.gov/universalwaste/household-hazardous-waste/.
  - Use water and an all-purpose cleaner to clean the shelves, counters, floors, and other surfaces.



- Remove work clothes and shoes and store them in a bag. Wash work clothes separately from the rest of your family's laundry.
- Shower and wash your hair as soon as you finish working.
- Do not let children or pregnant women into the work area until you have cleaned it up.

If you think that your child or other family member has been around lead, ask your doctor to test for lead poisoning.

For more information on childhood lead poisoning, go to www.cdph.ca.gov/programs/clppb or call **1-510-620-5600**.

Childhood Lead Poisoning Prevention Branch

CDPH

# ທາສີໃໝ່ ຫຼືສ້ອມແປງ ບ້ານເກົ່າຂອງທ່ານບໍ?

## ປົກປ້ອງຄອບຄົວຂອງທ່ານຈາກ ການເປັນພິດຂອງສານຊືນ



## ທີ່ສ້າງຂຶ້ນກ່ອນປີ 1978 ອາດຈະມີສານຊືນຢູ່ໃນສີທາ.

ຢ່າຂູດ ຫຼືໃຊ້ກະດາດຊາຍຖູສີຢູ່ໃນບ້ານຂອງທ່ານ ນອກຈາກທີ່ທ່ານຮູ້ວ່າມັນບໍ່ມີສານຊືນຢູ່ໃນນັ້ນແລ້ວ.



### ການຂູດ ແລະການໃຊ້ກະດາດຊາຍຖູສີເກົ່າສາມາດເຮັດໃຫ້ເກີດຝຸ່ນສານຊືນທີ່ເປັນອັນຕະລາຍໄດ້

ສານຊືນຢູ່ໃນຝຸ່ນມີອັນຕະລາຍຫຼາຍຕໍ່ກັບເດັກນ້ອຍທີ່ຍັງອ່ອນ ແລະສາມາດເຮັດໃຫ້ເກີດເປັນພິດຂອງສານຊືນໄດ້. ສານຊືນສາມາດທຳລາຍສະໝອງ, ປະສາດ, ແລະໄຕຂອງເດັກອ່ອນໄດ້. ການເປັນພິດຂອງສານຊືນສາມາດເຮັດໃຫ້ເດັກນ້ອຍຮຽນບໍ່ໄດ້, ຕັ້ງສະມາທິໄດ້ຍາກ, ແລະມີການປະພຶດທີ່ຍາກລຳບາກ.

### ທ່ານ ແລະຄອບຄົວຂອງທ່ານສາມາດທີ່ຈະໄດ້ກືນກິນ ຫຼືຫາຍໃຈເອົາຝຸ່ນສານຊືນ

ທ່ານສາມາດຫາຍໃຈເອົາສານຊືນເຂົ້າໄປໄດ້ໃນຂະນະທີ່ກຳລັງຂູດ ຫຼືໃຊ້ກະດາດຊາຍຂັດຖູສີແຫ້ງ. ຜູ້ອື່ນທີ່ຢູ່ໃກ້ກໍ່ສາມາດຫາຍໃຈເອົາມັນເຂົ້າໄປໄດ້ຄືກັນ.

ຝຸ່ນສານຊືນຢູ່ໃນອາກາດສາມາດຕົກລົງໄປໃສ່ອາຫານ ແລະເຄື່ອງດື່ມຂອງທ່ານໄດ້.

ຝຸ່ນຊືນສາມາດເຂົ້າໄປຫາຮ່າງກາຍເດັກນ້ອຍຂອງທ່ານໄດ້ ເມື່ອເຂົາເຈົ້າເອົາສິ່ງທີ່ມີສານຊືນເຂົ້າໃສ່ປາກຂອງເຂົາເຈົ້າເຊັ່ນ: ເຄື່ອງຫຼິ້ນ ຫຼືມືຂອງເຂົາເຈົ້າ.

### ຈົ່ງເອົາສີຂອງທ່ານໄປກວດເບິ່ງສານຊືນ

ວິທີການດຽວທີ່ຈະຮູ້ໄດ້ວ່າ ບ້ານຂອງທ່ານມີສານຊືນຢູ່ໃນສີທາບ້ານຫຼືບໍ່ນັ້ນ ແມ່ນຕ້ອງເອົາມັນໄປກວດເບິ່ງ. ສຳລັບຂໍ້ມູນກ່ຽວກັບການກວດເບິ່ງ, ໄປເບິ່ງທີ່ www.cdph.ca.gov/Programs/CCDPHP/DEODC/CLPPB/Pages/home_test.aspx.

## ຮັກສາຄອບຄົວຂອງທ່ານໃຫ້ປອດໄພຈາກສານ

ຈ້າງຜູ້ຊ່ຽວຊານດ້ານສານຊືນທີ່ໄດ້ຮັບຮອງຂອງລັດຄາລີຟໍເນຍ(CA). ຜູ້ຮັບເໝົາເຫຼົ່ານີ້ແມ່ນໄດ້ຮັບການຝຶກອົບຮົມມາສະເພາະ ເພື່ອກວດຫາສານຊືນຢູ່ໃນບ້ານຂອງທ່ານແລະກຳຈັດພວກມັນອອກໄປໄດ້ຢ່າງປອດໄພ. ເພື່ອຊອກຫາຜູ້ຊ່ຽວຊານສານຊືນທີ່ໄດ້ຮັບຮອງແລ້ວ, ໄປເບິ່ງທີ່ www.cdph.ca.gov/Programs/CCDPHP/DEODC/CLPPB/Pages/LRChire_lead_prof.aspx ຫຼືໂທຫາເບີ **1-800-597-LEAD (5323)**.

ເນື່ອງຈາກຊ່ຽວຊານສານຊືນທີ່ໄດ້ຮັບການຮັບຮອງຂອງລັດຄາລີຟໍເນຍສາມາດຊອກຫາ ແລະກຳຈັດສານຊືນອອກໄປຈາກບ້ານທ່ານໄດ້ເທົ່ານັ້ນ, ຜູ້ຮັບເໝົາທັງໝົດທີ່ໄດ້ຈ້າງເຂົ້າມາສ້ອມແປງບ້ານແມ່ນຈະຕ້ອງໄດ້ຜ່ານການຝຶກອົບຮົມທີ່ໄດ້ຮັບການອະນຸມັດຈາກອົງການປົກປ້ອງສິ່ງແວດລ້ອມຂອງສະຫະລັດ ເພື່ອປ້ອງກັນບໍ່ໃຫ້ມີການແພກະຈາຍຂອງສານຊືນ ໃນຂະນະທີ່ເຂົາເຈົ້າເຮັດວຽກ. ເພື່ອຊອກຫາຜູ້ຮັບເໝົາທີ່ໄດ້ຮັບການຝຶກອົບຮົມພື້ນຖານແລ້ວນັ້ນ, ໄປເບິ່ງທີ່ http://cfpub.epa.gov/flpp/searchrrp_firm.htm ຫຼືໂທຫາເບີ **1-800-424-LEAD (5323)**.

**ຖ້າທ່ານບໍ່ໄດ້ວາງແຜນຈ້າງຜູ້ຮັບເໝົາ, ປະຕິບັດຕາມຄຳແນະນຳຕໍ່ໄປນີ້ ເພື່ອຊ່ວຍກັກກັນຝຸ່ນສານຊືນໃນຂະນະທີ່ທ່ານເຮັດວຽກຄື:**

### ກ່ອນທ່ານເຂົ້າເຮັດວຽກ



- ເອົາທຸກສິ່ງທຸກຢ່າງທີ່ທ່ານສາມາດເອົາອອກໄດ້ນັ້ນອອກໄປຈາກພື້ນທີ່ເຮັດວຽກເຊັ່ນ: ຜ້າເຊັດຕີນ, ຜ້າກັ້ງ, ເຟີນີເຈີ, ເຄື່ອງຫຼິ້ນເດັກນ້ອຍ, ເຄື່ອງນຸ່ງ, ເກີບ, ອາຫານ, ແລະເຄື່ອງດື່ມ.
- ໃຊ້ສະກັອດຕິດແຜ່ນຫຸ້ມດ້ວຍປລາສຕິກສຳລັບການເຮັດວຽກທັງດ້ານໃນ ແລະດ້ານນອກ. ໃຫ້ປົກພື້ນ, ເຄື່ອງເຟີນິເຈີໃຫຍ່, ເຄື່ອງຫຼິ້ນຕ່າງໆ, ແລະພື້ນຜິວທາງນອກຢູ່ໃກ້ຄຽງເຊັ່ນ: ແກວ ຫຼືຄອນກຣີດ.
- ປິດເຄື່ອງທຳຄວາມຮ້ອນ ຫຼືແອປັບອາກາດ.
- ໃຊ້ສະກັອດຕິດປລາສຕິກຢູ່ເທິງທໍ່ຕ່າງໆຢູ່ໃນພື້ນ, ເພດານ, ຫຼືຝາເຮືອນ.
- ເຮັດຜ້າກັ້ງໂດຍການໃຊ້ສະກັອດຕິດແຜ່ນຫຸ້ມປລາສຕິກຢູ່ເໜືອປະຕູທາງເຂົ້າບ່ອນເຮັດວຽກ.
- ນຸ່ງເຄື່ອງຊຸດເຮັດວຽກ ແລະເອົາມັນແຍກອອກໄປຈາກເຄື່ອງນຸ່ງອື່ນທັງໝົດ.

### ໃນຂະນະທີ່ທ່ານເຮັດວຽກຢູ່

- ບໍ່ໃຫ້ເດັກນ້ອຍ ແລະແມ່ຍິງຖືພາຢູ່ໃນບ່ອນເຮັດວຽກ.
- ໃຊ້ຂວດສະເປຣສີດນ້ຳໃສ່ທຸກພື້ນຜິວໃຫ້ຊຸ່ມກ່ອນ ແລະລະຫວ່າງທີ່ໃຊ້ກະດາດຊາຍຂັດ ຫຼືຂູດສີ.
- ຫຼີກເວັ້ນການນຳເອົາຝຸ່ນສານຊືອອກໄປຈາກບ່ອນເຮັດວຽກຄື:
  - ຢ່າອອກໄປຈາກບ່ອນເຮັດວຽກໂດຍທີ່ທ່ານຍັງໃສ່ຊຸດເຮັດວຽກແລະເກີບເຮັດວຽກຢູ່.
  - ແກ້ເຄື່ອງນຸ່ງ ແລະປົດເກີບເຮັດວຽກອອກແລະລ້າງມືຂອງທ່ານກ່ອນທີ່ຈະນັ່ງລົງຢູ່ໃນເຟີນິເຈີ,ຫຼິ້ນກັບເດັກນ້ອຍ,ຫຼືຈັບເຄື່ອງຫຼິ້ນເດັກນ້ອຍ ຫຼືວັດຖຸອື່ນໆ.



- ຢ່າກິນອາຫານ, ດື່ມນ້ຳ, ຫຼືສູບຢາຢູ່ບ່ອນເຮັດວຽກ. ແກ້ເຄື່ອງນຸ່ງ ແລະປົດເກີບເຮັດວຽກອອກ ແລະລ້າງມືຂອງທ່ານ, ແລະອອກໄປຈາກບ່ອນເຮັດວຽກກ່ອນທີ່ຈະກິນອາຫານ, ດື່ມນ້ຳ, ຫຼືສູບຢາ.

### ຫຼັງຈາກທ່ານເຮັດວຽກແລ້ວ

- ອະນາໄມບ່ອນເຮັດວຽກໃນແຕ່ລະມື້.
  - ໃຊ້ກ່ອງສະເປຣສີດກາບສີທີ່ລອກອອກມາ ໃຫ້ຊຸ່ມ. ພັບແຜ່ນປລາສຕິກເຂົ້າໃນຢ່າງ ລະມັດລະວັງ ແລະເອົາໃສ່ໃນຖົງທີ່ປິດ ແໜ້ນຢ່າງດີ. ຖ້າສີຂອງທ່ານມີສານຊືນຢູ່, ເອົາຖົງນັ້ນໄປໃຫ້ໂຄງການສິ່ງ ເສດ ເຫຼືອອັນຕະລາຍຈາກຄົວເຮືອນໃນທ້ອງຖິ່ນຂອງທ່ານ: https://dtsc.ca.gov/universalwaste/household-hazardous-waste/.
  - ໃຊ້ນ້ຳ ແລະນ້ຳຢາທຳຄວາມສະອາດອະເນກປະສົງ ເພື່ອທຳຄວາມສະອາດຮ້ານຕ່າງໆ, ເຄົາເຕີ້, ພື້ນເຮືອນ ແລະພື້ນຜິວອື່ນໆ.
- ແກ້ເຄື່ອງນຸ່ງ ແລະປົດເກີບໃສ່ເຮັດວຽກອອກ ແລະເກັບພວກມັນໄວ້ຢູ່ໃນຖົງ. ຊັກເຄື່ອງນຸ່ງເຮັດວຽກແຍກຕ່າງຫາກ ບໍ່ເອົາໄປປົນກັບເຄື່ອງຊັກຂອງຄອບຄົວຂອງທ່ານ.
- ອາບນ້ຳ ແລະສະຜົມຂອງທ່ານທັນທີທີ່ທ່ານແລ້ວວຽກ.
- ຢ່າໃຫ້ເດັກນ້ອຍ ຫຼືແມ່ຍິງຖືພາຢູ່ໃນບ່ອນເຮັດວຽກຈົນກວ່າທ່ານຈະອະນາໄມມັນສຳເລັດ.



**ຖ້າທ່ານຄິດວ່າ ເດັກນ້ອຍ ຫຼືສະມະຊິກຄອບຄົວຂອງທ່ານຢູ່ໃນບ່ອນທີ່ມີສານຊືນ, ໃຫ້ບອກທ່ານໝໍຂອງທ່ານກວດເບິ່ງຄວາມເປັນພິດຂອງສານຊືນ.**

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບການເປັນພິດຂອງສານຊືນຢູ່ໃນໄວເດັກ, ໄປເບິ່ງທີ່ www.cdph.ca.gov/programs/clppb ຫຼືໂທຫາເບີ **1-510-620-5600**.

CHILDHOOD LEAD POISONING PREVENTION BRANCH

CDPH

Lao